ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ຊຽງຂວາງ

ເລກທີ ....407..../ຈຂ,ຊຂ

ທີ່ຊຽງຂວາງ, ວັນທີ 06.08.2020

# ຂໍ້ຕົກລົງ

## ວ່າດ້ວຍ ການກຳນົດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ຂອງແຂວງຊຽງຂວາງ

- ອີງຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ໄດ້ລະບຸໄວ້ໃນພາກທີ III, ໝວດທີ IV ມາດຕາ 20 ຂອງກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງເລກທີ 07/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ມະຕິກອງປະຊຸມສະໄໝວິສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງຊຽງຂວາງ ຊຸດທີ I ສະບັບເລກທີ 07/ສພຂ.ຊຂ, ລົງວັນທີ 31 ມັງກອນ 2020;
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 09/ສພຂ, ລົງວັນທີ 17 ກໍລະກົດ 2020.

## ເຈົ້າແຂວງ ຕົກລົງ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການຕິດຕາມ, ກວດກາ ການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ຂອງແຕ່ລະເຂດ ຢູ່ແຂວງຊຽງຂວາງ ເພື່ອເປັນບ່ອນອີງໃຫ້ ການຄິດໄລ່ ຄ່າທຳນຽມ ໃນການຈົດທະບຽນເຄື່ອນໄຫວ, ການປ່ຽນແປງສິດນຳໃຊ້ທີ່ດິນ ແລະ ການຫັນສິດນຳໃຊ້ທີ່ດິນຂອງລັດ ຢ່າງເປັນລະບົບ, ຄົບຊຸດ, ສະເໝີພາບ, ຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທຳ ໂດຍສອດຄ່ອງກັບ ກົດໝາຍ ແລະ ຄວາມເປັນຈິງ, ປະກອບສ່ວນເຂົ້າໃນ ການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ປົກປັກຮັກສາສະພາບແວດລ້ອມ ຕາມທິດຂຽວ, ສະອາດ ແລະ ຍືນຍົງ.

ຂໍ້ຕົກລົງສະບັບນີ້ ບໍ່ອະນຸຍາດໃຫ້ນຳໃຊ້ ເປັນບ່ອນອີງເຂົ້າໃນ ການຄິດໄລ່ຄ່າຊົດເຊີຍ, ການເວນຄືນ ທີ່ດິນ ແລະ ສິ່ງປຸກສ້າງ ທີ່ຖືກຜົນກະທົບ ຈາກບັນດາໂຄງການລົງທຶນຂອງລັດ ຫຼື ກິດຈະການຕ່າງໆ ໃຫ້ປະຕິບັດສ້າງເປັນຮູບແບບສະເພາະ ເຂົ້າໃນແຕ່ລະເປົ້າໝາຍ ທີ່ເກີດຂຶ້ນ.

**ມາດຕາ 2 ການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ**

ການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ແມ່ນການຕີລາຄາ ມູນຄ່າ ຂອງທີ່ດິນ ແລະ ສິ່ງປຸກສ້າງ ແນໃສ່ຮັບປະກັນປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳສູງສຸດ ຂອງຜູ້ນຳໃຊ້ສິດທີ່ດິນ ແລະ ເຈົ້າຂອງສິ່ງປຸກສ້າງ ໃຫ້ມີ ຄວາມຍຸຕິທຳ ແລະ ໂປ່ງໃສ ໃນແຕ່ລະເຂດຂອງແຂວງ ເພື່ອເປັນຖານຂໍ້ມູນດ້ານລາຄາ ໃນການຄິດໄລ່ຄ່າທຳນຽມ ເຊິ່ງຜູ້ຄອບຄອງສິດນຳໃຊ້ ຫຼື ຜູ້ເປັນເຈົ້າຂອງ ມີພັນທະ ທີ່ຕ້ອງເສຍໃຫ້ ລັດ ໃນເວລາຈົດທະບຽນນິຕິກຳ ກ່ຽວກັບ ທີ່ດິນ ແລະ ສິ່ງປຸກສ້າງ.

ການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ຈະມີການປັບປຸງແປງເປັນແຕ່ລະໄລຍະຂຶ້ນກັບ ສະພາບການປ່ຽນແປງ ທາງດ້ານເສດຖະກິດ-ການເງິນ, ການປັບປຸງ ກົດໝາຍ ວ່າດ້ວຍ ທີ່ດິນ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບທີ່ດິນ ແລະ ສິ່ງປຸກສ້າງ.

**ມາດຕາ 3 ການອະທິບາຍຄຳສັບ**

1. **ແຜນທີ່ເຂດປະເມີນລາຄາທີ່ດິນ** ໝາຍເຖິງ ແຜນທີ່ ທີ່ຖືກກຳນົດໃຫ້ມີການປະເມີນລາຄາ ໃນແຕ່ລະເຂດ ເຊິ່ງແຜນທີ່ແຕ່ລະສະບັບແມ່ນກວມເອົາ ຂອບເຂດພື້ນທີ່ຂອງເມືອງໃດໜຶ່ງ ທີ່ໄດ້ຮັບ ການສຳຫຼວດ, ກຳນົດເຂດ ແລະ ໄດ້ກຳນົດ ສັນຍາລັກ ເປັນຕົວອັກສອນລາຕິນ (A. B. C. D....) ໂດຍບົ່ງບອກເຖິງເມືອງ ແລະ ຖືກແບ່ງອອກເປັນຫຼາຍເຂດຍ່ອຍ ເອີ້ນວ່າ "ເຂດປະເມີນລາຄາທີ່ດິນ" ໂດຍໄດ້ຈັດພິມ ເປັນເອກະສານຊ້ອນທ້າຍ ດຳລັດ ຂໍ້ຕົກລົງ ສະບັບນີ້;

2. **ເຂດປະເມີນລາຄາທີ່ດິນ** ໝາຍເຖິງ ເຂດຍ່ອຍ ທີ່ນອນຢູ່ໃນ ຂອບເຂດພື້ນທີ່ ຂອງແຜນທີ່ເຂດປະເມີນລາຄາທີ່ດິນ ແລະ ຖືກໝາຍ ດ້ວຍສັນຍາລັກ ເປັນຕົວອັກສອນລາຕິນ ທີ່ມີເລກລຳດັບ ເຊັ່ນ: A1. B1. C1. D1...;

3. **ຕາຕະລາງລາຄາຄິດໄລ່ສຳລັບທີ່ດິນ** ໝາຍເຖິງ ຕາຕະລາງຄິດໄລ່ຫົວໜ່ວຍລາຄາທີ່ດິນ ທີ່ໄດ້ຮັບ ການສຳຫຼວດ, ເກັບກຳຂໍ້ມູນ, ໄດ້ຮັບ ການຄົ້ນຄ້ວາ ແລະ ຮັບຮອງ ຈາກອົງການປົກຄອງທ້ອງຖິ່ນ ທີ່ໄດ້ປະເມີນ ເປັນແຕ່ລະເຂດ ຂຶ້ນກັບທີ່ຕັ້ງ ຂອງຕອນດິນ ໃນແຕ່ລະປະເພດພື້ນທີ່ ແລະ ເສັ້ນທາງ;

4. **ຕາຕະລາງລາຄາຄິດໄລ່ສຳລັບສິ່ງປຸກສ້າງ** ໝາຍເຖິງ ຕາຕະລາງຄິດໄລ່ຫົວໜ່ວຍລາຄາສິ່ງປຸກສ້າງ ໂດຍໄດ້ກຳນົດເວລາອອກເປັນສອງໄລຍະ ກ່ອນໜ້າ ແລະ ລຸນຫຼັງ ປີ 2000;

5. **ອັດຕາສ່ວນຫຼຸດສຳລັບເນື້ອທີ່ດິນ** ໝາຍເຖິງ ການຄິດໄລ່ລາຄາທີ່ດິນ ທີ່ຖືກປ່ຽນສະພາບຮູບ ເຮັດໃຫ້ ລາຄາທີ່ດິນຫຼຸດລົງ ຈາກສະພາບເດີມຂອງທີ່ດິນ ເຊັ່ນ: ສ່ວນໜຶ່ງ ຫຼື ທັງໝົດ ຂອງທີ່ດິນປຸກສ້າງ ຫັນປ່ຽນ ເປັນດິນປູກຝັງ, ທົ່ງນາ, ໜອງ ແລະ ອື່ນໆ;

6. **ອັດຕາສ່ວນເພີ່ມຂຶ້ນສຳລັບເນື້ອທີ່ດິນ** ໝາຍເຖິງ ການຄິດໄລ່ລາຄາທີ່ດິນ ທີ່ຖືກປ່ຽນສະພາບຮູບ ເຮັດໃຫ້ລາຄາທີ່ດິນເພີ່ມຂຶ້ນ ຈາກສະພາບເດີມຂອງທີ່ດິນ ເຊັ່ນ: ສ່ວນໜຶ່ງ ຫຼື ທັງໝົດ ຂອງທີ່ດິນ ປູກຝັງ, ທົ່ງນາ, ໜອງ ແລະ ອື່ນໆ ຫັນປ່ຽນ ເປັນດິນປຸກສ້າງທີ່ຢູ່ອາໄສ ຫຼື ດິນອຸດສາຫະກຳ;

7. **ປະເພດເສັ້ນທາງ** ໝາຍເຖິງ ປະເພດ ຂອງເສັ້ນທາງ ທີ່ຖືກກຳນົດ ເພື່ອຄິດໄລ່ລາຄາທີ່ດິນ ເຂົ້າໃນຕາຕະລາງລາຄາຄິດໄລ່ທີ່ດິນ ເຊິ່ງໄດ້ກຳນົດ ຄື: ຖະໜົນຫຼັກ (ທາງປະເພດ 01); ຖະໜົນເຊື່ອມຕໍ່ກັບ ຖະໜົນຫຼັກ (ທາງປະເພດ 02); ຖະໜົນສາຍແຈກ ຫຼື ທາງຮ່ອມ (ທາງປະເພດ 03) ແລະ ທາງທຽວດັ່ງເດີມ (ທາງປະເພດ 04);

8. **ຖະໜົນຫຼັກ** ໝາຍເຖິງ ເສັ້ນທາງທີ່ຮັບເອົາກະແສການຈະລາຈອນທັງໝົດຂອງຕົວເມືອງ ລວມທັງກະແສຈະລາຈອນການເຂົ້າ-ອອກຕົວເມືອງ ຊຶ່ງແຜນຜັງຕົວເມືອງໄດ້ກຳນົດເປັນຖະໜົນສາຍເອກ ແລະ ໄດ້ກຳນົດໃນແຜນທີ່ເຂດປະເມີນລາຄາ ເປັນ ສີບົວ.

9. **ຖະໜົນເຊື່ອມຕໍ່** ໝາຍເຖິງ ເສັ້ນທາງທີ່ຮັບເອົາກະແສການຈະລາຈອນຈາກເສັ້ນທາງສາຍຫຼັກ ແລະ ເສັ້ນຕ່າງໆຂອງຕົວເມືອງເຊັ່ນ ເຂດທີ່ຢູ່ອາໄສ, ເຂດການຄ້າໃຈກາງເມືອງ, ເຂດອຸດສາຫະກຳ ແລະ ເຊື່ອມຈອດກັບຖະໜົນ ຊຶ່ງແຜນຜັງຕົວເມືອງໄດ້ກຳນົດ ແລະ ໄດ້ກຳນົດຢູ່ແຜນທີ່ເຂດປະເມີນລາຄາ ເປັນ ສີຟ້າ.

10. **ຖະໜົນສາຍແຈກ ຫລື ທາງຮ່ອມ** ໝາຍເຖິງ ເສັ້ນທາງທີ່ຮັບເອົາກະຈາຍກະແສການຈະລາຈອນລະຫວ່າງທາງໃນຄຸ້ມຕ່າງໆຂອງຕົວເມືອງ ແລະ ທາງຢູ່ໃນເຂດ ຫລືສະຖານທີ່ຕ່າງໆຂອງຕົວເມືອງ ເຊື່ອມຈອດກັບຖະໜົນໃຫຍ່ ແລະ ຖະໜົນນ້ອຍ ຊຶ່ງແຜນຜັງຕົວເມືອງໄດ້ກຳນົດເປັນຖະໜົນສາຍແຈກ ແລະ ໄດ້ກຳນົດຢູ່ແຜນທີ່ເຂດປະເມີນລາຄາ ເປັນ ສີຂຽວ.

11. **ທາງທຽວດັ້ງເດີມ** ໝາຍເຖິງ ເສັ້ນທາງແບບທາມະຊາດ, ຍັງບໍ່ທັນໄດ້ຮັບການພັດທະນາ, ການສັນຈອນບໍ່ທັນສະດວກ ແລະ ເສັ້ນທາງດັ່ງກ່າວ ບໍ່ໄດ້ສະແດງສັນຍາລັກ ຫຼື ເປັນສີໃດໜຶ່ງຢູ່ໃນແຜນທີເຂດປະເມີນເຂດລາຄາທີ່ດິນ ແລະ ບໍ່ສະແດງເສັ້ນທາງໃນໃບຕາດິນ.

12. **ປະເພດເສັ້ນທາງສ້າງຂຶ້ນໃໝ່** ໝາຍເຖິງ ປະເພດ ຂອງເສັ້ນທາງ ທີ່ບຸກຄົນ ຫຼື ນິຕິບຸກຄົນ ພັດທະນາຂຶ້ນໃໝ່ ທີ່ມີມາດຕະຖານ ໃຫ້ກຳນົດເປັນ ຖະໜົນສາຍແຈກ ຫຼື ທາງຮ່ອມ ປະເພດ 03 ແລະ ຖ້າເປັນທາງຮ່ອມ ບໍ່ໄດ້ມາດຕະຖານ ໃຫ້ຖືເປັນ ທາງປະເພດ 04 ທາງທຽວດັ້ງເດີມ;

13. **ສິ່ງປຸກສ້າງ** ໝາຍເຖິງ ສິ່ງກໍ່ສ້າງ ທີ່ຕັ້ງຢູ່ໃນ ຂອບເຂດຕອນດິນກ່ຽວຂ້ອງ ເຊັ່ນ: ອາຄານທີ່ຢູ່ອາໄສ, ໂຮງແຮມ, ສໍານັກງານ, ສາງ, ຮ້ານອາຫານ ແລະ ອື່ນໆເປັນຕົ້ນ;

14. **ປະເພດສິ່ງປຸກສ້າງ** ໝາຍເຖິງ ປະເພດ ຂອງສິ່ງປຸກສ້າງ ຕາມມາດຕະຖານເຕັກນິກການອອກແບບ ທີ່ມີຂະໜາດ, ຊັ້ນ, ຄຸນນະພາບວັດສະດຸກໍ່ສ້າງ ເພື່ອກຳນົດເປັນປະເພດ ຖາວອນ, ເຄິ່ງຖາວອນ ແລະ ບໍ່ຖາວອນ;

15. **ຄຸນນະພາບສິ່ງປຸກສ້າງ** ໝາຍເຖິງ ມາດຕະຖານ ຂອງສິ່ງປຸກສ້າງ ເຊິ່ງຖືກແບ່ງອອກເປັນ ຄຸນນະພາບດີສຸດ, ດີ, ປານກາງ, ທຳມະດາ ແລະ ຄຸນນະພາບຕໍ່າ ຂຶ້ນກັບມາດຕະຖານເຕັກນິກການອອກແບບ ທີ່ມີຂະໜາດ, ຊັ້ນ, ວັດສະດຸກໍ່ສ້າງ ເພື່ອເປັນບ່ອນອີງ ໃນການຄິດໄລ່ລາຄາ;

16. **ການເຄື່ອນໄຫວສິດນຳໃຊ້ທີ່ດິນ ຫຼື ສິ່ງປຸກສ້າງ** ໝາຍເຖິງ ການເອົາທີ່ດິນ ຫຼື ສິ່ງປຸກສ້າງ ເປັນຫຼັກຊັບ ຄໍ້າປະກັນ, ເປັນຮຸ້ນ, ໃຫ້ເຊົ່າ ຫຼື ສຳປະທານ;

17. **ການປ່ຽນແປງສິດນຳໃຊ້ທີ່ດິນ ຫຼື ສິ່ງປຸກສ້າງ** ໝາຍເຖິງ ການເອົາທີ່ດິນ ຫຼື ສິ່ງປຸກສ້າງ ແລກປ່ຽນ, ມອບ, ໂອນ, ສືບທອດມູນມໍລະດົກ ຫຼື ຊື້-ຂາຍ.

**ມາດຕາ 4 ນະໂຍບາຍຂອງແຂວງ ກ່ຽວກັບ ການກຳນົດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ**

ນະໂຍບາຍ ກ່ຽວກັບ ການກຳນົດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ມີດັ່ງນີ້:

ແຂວງ ຊຸກຍູ້, ສົ່ງເສີມ ການກຳນົດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ດ້ວຍການສະໜອງ ທຶນພື້ນຖານວັດຖຸ-ເຕັກນິກ, ພາຫະນະ, ອຸປະກອນເຄື່ອງມື, ຂໍ້ມູນຂ່າວສານ, ຊັບພະຍາກອນມະນຸດ, ການຝຶກອົບຮົມຍົກລະດັບວິຊາການ ແລະ ນິຕິກຳຕ່າງໆ ເພື່ອອຳນວຍຄວາມສະດວກ ໃນການຄົ້ນຄວ້າ, ສຳຫຼວດ, ເກັບກຳຂໍ້ມູນ ໃນການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ເປັນແຕ່ລະໄລຍະ ຢ່າງເໝາະສົມ.

ແຂວງ ສົ່ງເສີມໃຫ້ ບຸກຄົນ, ນິຕິບຸກຄົນ, ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃຫ້ການຮ່ວມມືພັດທະນາ ການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ດ້ວຍການສະໜອງທຶນ, ຂໍ້ມູນຂ່າວສານ, ອຸປະກອນເຄື່ອງມື ແລະ ພາຫະນະ.

**ມາດຕາ 5 ຫຼັກການກຳນົດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ**

ຫຼັກການ ໃນການກຳນົດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ມີດັ່ງນີ້:

1. ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບ ວຽກງານຄຸ້ມຄອງທີ່ດິນ ແລະ ສິ່ງປຸກສ້າງ ເພື່ອເປັນບ່ອນອີງໃຫ້ແກ່ ການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ;
2. ສອດຄ່ອງກັບ ແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ຮັບປະກັນ ຕາມທິດສີຂຽວ, ສະອາດ ແລະ ຍືນຍົງ;
3. ສອດຄ່ອງກັບ ຫຼັກການສະເໝີພາບ, ໂປ່ງໃສ, ຍຸຕິທຳ, ຄວາມເປັນຈິງ ແລະ ເອກະພາບ ຕໍ່ຈຸດ-ທີ່ຕັ້ງ ຂອງທີ່ດິນ ແລະ ສິ່ງປຸກສ້າງ ໃນແຕ່ລະເຂດ, ການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະເມືອງ ພາຍໃນແຂວງ;
4. ສອດຄ່ອງກັບ ຜົນປະໂຫຍດອັນຊອບທຳ ຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

5. ສອດຄ່ອງກັບ ມາດຕະຖານ ຮັບປະກັນ ດ້ານຂໍ້ມູນເດັດຖານເອກະພາບ ໃນການກຳນົດ ພັນທະຕໍ່ລັດ ແລະ ການປະເມີນຫຼັກຊັບ ຂອງຜູ້ມີສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ແລະ ເປັນເຈົ້າຂອງສິ່ງປຸກສ້າງ ຢູ່ແຂວງຊຽງຂວາງ.

## ໝວດທີ II
## ການກຳນົດເຂດ ແລະ ຕາຕະລາງປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ

**ມາດຕາ 7 ປະເພດຖະໜົນ**

ຖະໜົນ ມີ 4 ປະເພດ: ຖະໜົນຫຼັກ, ຖະໜົນເຊື່ອມຕໍ່, ຖະໜົນສາຍແຈກ ແລະ ທາງຫຼວງດັ້ງເດີມ ດັ່ງນີ້:

1. ຖະໜົນຫຼັກ ໄດ້ກຳນົດໄວ້ໃນ ແຜນທີ່ເຂດປະເມີນລາຄາ (ເປັນສີບົວ);
2. ຖະໜົນເຊື່ອມຕໍ່ ໄດ້ກຳນົດໄວ້ໃນ ແຜນທີ່ເຂດປະເມີນລາຄາ (ເປັນສີຟ້າ);
3. ຖະໜົນສາຍແຈກ ໄດ້ກຳນົດໄວ້ໃນ ແຜນທີ່ເຂດປະເມີນລາຄາ (ເປັນສີຂຽວ);
4. ທາງຫຼວງດັ້ງເດີມ ແມ່ນບໍ່ສະແດງໃນ ແຜນທີ່ເຂດປະເມີນລາຄາ ເປັນທາງທຳມະຊາດ ທີ່ລັດຖະບານບໍ່ທັນພັດທະນາໄປຮອດ.

**ມາດຕາ 8 ລະຫັດ ຂອງແຕ່ລະເມືອງ**

ລະຫັດ ຂອງແຕ່ລະເມືອງ ທີ່ໄດ້ກຳນົດໄວ້ໃນ ແຜນທີ່ ຂອງເຂດປະເມີນລາຄາທີ່ດິນ ມີດັ່ງນີ້:

1. A ໝາຍເຖິງ ລະຫັດ ຂອງເມືອງແປກ;
2. B ໝາຍເຖິງ ລະຫັດ ຂອງເມືອງຄຳ;
3. C ໝາຍເຖິງ ລະຫັດ ຂອງເມືອງໜອງແຮດ;
4. D ໝາຍເຖິງ ລະຫັດ ຂອງເມືອງຄູນ;
5. E ໝາຍເຖິງ ລະຫັດ ຂອງເມືອງ ໝອກ;
6. F ໝາຍເຖິງ ລະຫັດ ຂອງເມືອງພູກູດ;
7. G ໝາຍເຖິງ ລະຫັດ ຂອງເມືອງຜາໄຊ.

**ມາດຕາ 9 ຕາຕະລາງລາຄາທີ່ດິນ ທີ່ຖືກກຳນົດຕາມການປະເມີນ ໃນ 7 ເມືອງ ຂອງແຂວງຊຽງຂວາງ**

ຕາຕະລາງລາຄາທີ່ດິນໃນມາດຕານີ້ ໄດ້ກຳນົດເປັນເອກະສານຊ້ອນທ້າຍ ມີການປ່ຽນແປງຕາມມາດຕາ 2 ຂອງຂໍ້ຕົກລົງສະບັບນີ້. ເຊິ່ງໄດ້ກຳນົດຈາກຕາຕະລາງທີ 01 ຫາ 07;

**ມາດຕາ 10 ກຳນົດອັດຕາສ່ວນຫລຸດສຳລັບເນື້ອທີ່ດິນ**

ການກຳນົດອັດຕາສ່ວນຫລຸດສຳລັບເນື້ອທີ່ດິນ ໄດ້ກຳນົດ ດັ່ງລຸ່ມນີ້ :

| ເນື້ອທີ່ (ຕາແມັດ) | ເປີເຊັນຄິດໄລ່ |
|---|---|
| ເນື້ອທີ່ດິນແຕ່ 800 ຕາແມັດ ລົງມາ | 100% |
| ເນື້ອທີ່ດິນແຕ່ 801-3,200 ຕາແມັດ | 75% |
| ເນື້ອທີ່ດິນແຕ່ 3,201-4,000 ຕາແມັດ | 65% |
| ເນື້ອທີ່ດິນແຕ່ 4,001-8,000 ຕາແມັດ | 55% |
| ເນື້ອທີ່ດິນແຕ່ 8,001 ຕາແມັດ ຂຶ້ນໄປ | 50% |

**ມາດຕາ 11 ການກຳນົດລາຄາສິ່ງປຸກສ້າງ**

ການກຳນົດລາຄາສິ່ງປຸກສ້າງ ໃນທົ່ວແຂວງຊຽງຂວາງ ປະຕິບັດ ເປັນສອງໄລຍະ ແລະ ຂຶ້ນກັບປະເພດ, ຄຸນນະພາບ ຂອງວັດສະດຸກໍ່ສ້າງ ດັ່ງນີ້:

1. **ການກຳນົດລາຄາສິ່ງປຸກສ້າງໄດ້ ແບ່ງເປັນ 2 ໄລຍະຄື:** ກ່ອນປີ 2000 ກຳນົດ 20% ແລະ ຫລັງປີ 2000 ກຳນົດ 30% ຂອງລາຄາຫົວໜ່ວຍກໍ່ສ້າງເຄຫາສະຖານ ທີ່ກົມເຄຫາ ແລະ ຜັງເມືອງ, ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ກຳນົດໄວ້ ປີ 2013 ຊຶ່ງເປັນຫົວໜ່ວຍລາຄາ ທີ່ບໍ່ໄດ້ຫັກ ຄ່າຫລຸ້ຍຫ້ຽນ ຂອງລາຄາກໍ່ສ້າງອາຄານ ໃນເວລາຄິດໄລ່ ຄ່າທຳນຽມຈົດທະບຽນ;

2. **ກຳນົດປະເພດສິ່ງປຸກສ້າງເປັນ 4 ປະເພດ ຄື:**

- ເຮືອນໄມ້ຊີງລາວແບບທັນສະໄໝ: ໂຄງສ້າງໄມ້ເນື້ອແຂງ, ໄມ້ມີຄ່າ, ໄມ້ເສດຖະກິດ, ຫລັງຄາມຸງດິນຂໍໂຄງໄມ້ ເພດານໄມ້ເນື້ອແຂງເຂົ້າຫລິ້ມບອນໃນປະເພດໄມ້ເສດຖະກິດ,ອອກແບບທັນສະໄໝປະສົມກັບການອອກແບບ ເຮືອນລາວເກົ່າປະຍຸກ.
- ເຮືອນກໍ່: ຝາກໍ່ ດ້ວຍດິນບ໋ອກ, ດິນຈີ່, ຫຼັງຄາ ມຸງດ້ວຍສັງກະສີ ຫຼື ກະເບື້ອງ, ວັດສະດຸກໍ່ສ້າງມີຄຸນນະພາບ ດີ
- ເຮືອນປະສົມ (ລຸ່ມກໍ່ເທິງໄມ້): ດ້ານລຸ່ມ ກໍ່ ດ້ວຍຊີມັງ, ດ້ານເທິງ ເຮັດ ດ້ວຍໄມ້, ໂຄງໄມ້, ຫຼັງຄາມຸງດ້ວຍກະເບື້ອງ ຫຼື ດິນຂໍ ຊຶ່ງມີຄຸນຄ່າທາງດ້ານວັດທະນະທຳ;
- ເຮືອນໄມ້, ເຮືອນໂຄງເຫຼັກ: ໂຄງສ້າງຂອງເຮືອນທັງໝົດ ເຮັດດ້ວຍໄມ້ ຫຼື ເຫຼັກ ຫຼັງຄາມຸງດ້ວຍສັງກະສີ ຫຼື ກະເບື້ອງ;

ຕາຕະລາງລາຄາສິ່ງປຸກສ້າງແຕ່ລະປະເພດມີດັ່ງນີ້:

| ປະເພດສິ່ງປຸກສ້າງ | ລາຄາສິ່ງປຸກສ້າງ (ກີບ/ຕາແມັດ) | |
|---|---|---|
| | ກ່ອນປີ 2000 | ຫລັງປີ 2000 |
| ເຮືອນໄມ້ຊີງລາວ(ໄມ້ຄຸນນະພາບ) | 500,000 | 800,000 |
| ເຮືອນກໍ່ຖາວອນ | 400,000 | 700,000 |
| ເຮືອນປະສົມ (ລຸ່ມກໍ່ເທິງໄມ້) | 300,000 | 600,000 |
| ເຮືອນໄມ້, ເຮືອນໂຄງເຫຼັກ | 150,000 | 300,000 |

**ມາດຕາ 12 ການຄິດໄລ່ ເພື່ອປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ**

**1. ການຄິດໄລ່ ເພື່ອປະເມີນລາຄາທີ່ດິນ**

ເອົາເນື້ອທີ່ ຂອງຕອນທີ່ດິນກ່ຽວຂ້ອງ ຄູນກັບ ລາຄາປະເມີນ ທີ່ໄດ້ກຳນົດໄວ້ ໃນຕາຕະລາງລາຄາທີ່ດິນ ທີ່ຖືກປະເມີນ ໃນແຕ່ລະເຂດ ຂອງບັນດາເມືອງ ພາຍໃນແຂວງຊຽງຂວາງ ຕາມມາດຕາ 9 ແລະ ສອດຄ່ອງກັບ ອັດຕາສ່ວນຫຼຸດເນື້ອທີ່ດິນ ທີ່ໄດ້ກຳນົດໄວ້ ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

**2. ການຄິດໄລ່ ເພື່ອປະເມີນລາຄາສິ່ງປຸກສ້າງ**

ເອົາເນື້ອທີ່ ຂອງສິ່ງປຸກສ້າງ ຄູນກັບ ລາຄາປະເມີນ ທີ່ໄດ້ກຳນົດໄວ້ ໃນຕາຕະລາງລາຄາສິ່ງປຸກສ້າງ ທີ່ໄດ້ກຳນົດໄວ້ ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 13 ການຄິດໄລ່ ຄ່າທຳນຽມ ແລະ ອາກອນ ຈົດທະບຽນນິຕິກຳ ກ່ຽວກັບ ທີ່ດິນ**

ອັດຕາການຄິດໄລ່ ຄ່າທຳນຽມ ແລະ ອາກອນຈົດທະບຽນທີ່ດິນ ຕ້ອງປະຕິບັດ ຕາມລັດຖະບັນຍັດ ຂອງປະທານປະເທດ ແລະ ກົດໝາຍ ວ່າດ້ວຍ ອາກອນ ທີ່ໄດ້ປະກາດໃຊ້ ໃນແຕ່ລະໄລຍະ.

## ໝວດທີ III
## ພັນທະ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພົນລະເມືອງ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້

**ມາດຕາ 14 ພັນທະ**

ພົນລະເມືອງ ເຊິ່ງແມ່ນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ຢູ່ແຂວງຊຽງຂວາງ ຕ້ອງເສຍພັນທະຕ່າງໆ ກ່ຽວກັບ ການເຄື່ອນໄຫວສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 15 ສິດ ແລະ ໜ້າທີ່**

ພົນລະເມືອງ ເຊິ່ງແມ່ນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ຢູ່ແຂວງຊຽງຂວາງ ມີສິດ ແລະ ໜ້າທີ່ ສະເໜີຈົດທະບຽນນິຕິກຳກ່ຽວກັບທີ່ດິນ ແລະ ສິ່ງປຸກສ້າງນຳຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການກ່ຽວຂ້ອງ ໂດຍປະກອບເອກະສານ ແລະ ປະຕິບັດຂັ້ນຕອນຕ່າງໆ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 16 ຄວາມຮັບຜິດຊອບ**

ພົນລະເມືອງ ເຊິ່ງແມ່ນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ຢູ່ແຂວງຊຽງຂວາງ ຕ້ອງຮັບຜິດຊອບ ຄ່າໃຊ້ຈ່າຍທັງໝົດ ໃນກໍລະນີມີ ການປ່ຽນແປງ, ການເຄື່ອນໄຫວສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມຂໍ້ຕົກລົງສະບັບນີ້.

## ໝວດທີ IV
## ການຄຸ້ມຄອງ ແລະ ການຕິດຕາມກວດກາ

**ມາດຕາ 17 ການຄຸ້ມຄອງ ການກຳນົດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ**

ອົງການປົກຄອງແຂວງຊຽງຂວາງ ຄຸ້ມຄອງ ການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ຢ່າງລວມສູນ ໃນຂອບເຂດທົ່ວແຂວງຊຽງຂວາງ ໂດຍມອບໃຫ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນໃຈກາງ ແລະ ສົມທົບກັບ ບັນດາຂະແໜງການ ແລະ ບັນດາເມືອງ ພາຍໃນແຂວງ ຈັດຕັ້ງປະຕິບັດຕົວຈິງ.

**ມາດຕາ 18 ຄະນະຮັບຜິດຊອບການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ**

18.1. ຄະນະຮັບຜິດຊອບ ການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງຂັ້ນແຂວງ

ແມ່ນການຈັດຕັ້ງໜຶ່ງ ທີ່ຖືກແຕ່ງຕັ້ງ ໂດຍເຈົ້າແຂວງ ແຂວງຊຽງຂວາງ ທັງເປັນເສນາທິການ ຂອງອົງການປົກຄອງແຂວງ ເຊິ່ງປະກອບດ້ວຍບັນດາພະແນກການຕ່າງໆ ດັ່ງນີ້:

1. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
2. ພະແນກໂຍທາທິການ ແລະ ຂົນສົ່ງ;
3. ພະແນກການເງິນ;
4. ພະແນກກະສິກຳ ແລະ ປ່າໄມ້;
5. ຫ້ອງວ່າການແຂວງ;
6. ພະແນກຍຸຕິທຳ;
7. ພະແນກພາຍໃນ;
8. ບັນດາຂະແໜງການທີ່ກ່ຽວຂ້ອງ.

18.2. ຄະນະຮັບຜິດຊອບ ການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງຂັ້ນເມືອງ

ແມ່ນການຈັດຕັ້ງໜຶ່ງ ທີ່ຖືກແຕ່ງຕັ້ງ ໂດຍເຈົ້າເມືອງ ທັງເປັນເສນາທິການ ຂອງອົງການປົກຄອງເມືອງ ເຊິ່ງປະກອບດ້ວຍບັນດາຫ້ອງການຕ່າງໆ ດັ່ງນີ້:

1. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

2. ຫ້ອງການໂຍທາທິການ ແລະ ຂົນສົ່ງ;
3. ຫ້ອງການການເງິນ;
4. ຫ້ອງການກະສິກຳ ແລະ ປ່າໄມ້;
5. ຫ້ອງວ່າການເມືອງ;
6. ຫ້ອງການຍຸຕິທຳ;
7. ຫ້ອງການພາຍໃນ;
8. ບັນດາຫ້ອງການ ແລະ ບ້ານທີ່ກ່ຽວຂ້ອງ.

**ມາດຕາ 19 ອົງການຄຸ້ມຄອງວຽກງານປະເມີນລາຄາທີ່ດິນ**

ອົງການຄຸ້ມຄອງວຽກງານປະເມີນລາຄາທີ່ດິນ ມີ 3 ຂັ້ນ ດັ່ງນີ້:

1. ອົງການຄຸ້ມຄອງວຽກງານການປະເມີນລາຄາທີ່ດິນຂັ້ນແຂວງ ຖືກແຕ່ງຕັ້ງ ໂດຍຫົວໜ້າພະແນກຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມແຂວງ;

2. ອົງການຄຸ້ມຄອງວຽກງານການປະເມີນລາຄາທີ່ດິນຂັ້ນເມືອງ ຖືກແຕ່ງຕັ້ງ ໂດຍຫົວໜ້າຫ້ອງການຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມເມືອງ;

3. ໜ່ວຍງານຄຸ້ມຄອງວຽກງານປະເມີນລາຄາທີ່ດິນຂອງບ້ານ ຖືກແຕ່ງຕັ້ງ ໂດຍຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານປະເມີນລາຄາທີ່ດິນຂັ້ນແຂວງ**

ອົງການຄຸ້ມຄອງວຽກງານປະເມີນທີ່ດິນຂັ້ນແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ເປັນປົກກະຕິ ແລະ ກວ້າງຂວາງ ເພື່ອເຮັດໃຫ້ທຸກຄົນໃນທົ່ວແຂວງ ຮັບຮູ້, ເຊື່ອມຊຶມ ແລະ ພ້ອມກັນເຂົ້າຮ່ວມຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;

2. ປຸກລະດົມຂົນຂວາຍ ທົ່ວສັງຄົມ ແລະ ປະຊາຊົນ ໃຫ້ຄວາມຮ່ວມມື ໃນການຄຸ້ມຄອງການປະເມີນລາຄາທີ່ດິນ ດ້ວຍການສະໜອງຂໍ້ມູນຂ່າວສານ ທີ່ຊັດເຈນ ແລະ ຖືກຕ້ອງ ຕາມຄວາມເປັນຈິງ;

3. ລາຍງານ ການເຄື່ອນໄຫວວຽກງານ, ການປ່ຽນແປງ ສະພາບເສດຖະກິດ-ສັງຄົມ, ການເໜັງຕີງ ລາຄາຊື້-ຂາຍສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ເປັນແຕ່ລະໄລຍະ ເພື່ອເປັນຂໍ້ມູນ ໃນການປັບປຸງການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ເປັນແຕ່ລະໄລຍະ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ຄວາມເປັນຈິງ;

4. ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະເໜີຍ້ອງຍໍ ຜູ້ທີ່ມີຜົນງານ ແລະ ລົງວິໄນ ຕໍ່ຜູ້ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຕາມກໍລະນີໜັກ ຫຼື ເບົາ;

5. ປະຕິບັດໜ້າທີ່ອື່ນໆ ທີ່ກົດໝາຍ ໄດ້ກຳນົດ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານປະເມີນລາຄາທີ່ດິນຂັ້ນເມືອງ**

ອົງການຄຸ້ມຄອງວຽກງານປະເມີນທີ່ດິນຂັ້ນເມືອງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ເປັນປົກກະຕິ ແລະ ກວ້າງຂວາງ ເພື່ອເຮັດໃຫ້ທຸກຄົນໃນທົ່ວເມືອງ ຮັບຮູ້, ເຊື່ອມຊຶມ ແລະ ພ້ອມກັນເຂົ້າຮ່ວມຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;

2. ປຸກລະດົມຂົນຂວາຍ ທົ່ວສັງຄົມ ແລະ ປະຊາຊົນ ໃຫ້ຄວາມຮ່ວມມື ໃນການຄຸ້ມຄອງການປະເມີນລາຄາທີ່ດິນ ດ້ວຍການສະໜອງຂໍ້ມູນຂ່າວສານ ທີ່ຊັດເຈນ ແລະ ຖືກຕ້ອງ ຕາມຄວາມເປັນຈິງ;

3. ລາຍງານ ການເຄື່ອນໄຫວວຽກງານ, ການປ່ຽນແປງ ສະພາບເສດຖະກິດ-ສັງຄົມ, ການເໜັງຕີງ ລາຄາຊື້-ຂາຍສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ໃນຂອບເຂດເມືອງ ເປັນແຕ່ລະໄລຍະ ເພື່ອເປັນຂໍ້ມູນ ໃນການສະເໜີປັບປຸງການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ເປັນແຕ່ລະໄລຍະ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ຄວາມເປັນຈິງ;

4. ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະເໜີຍ້ອງຍໍ ຜູ້ທີ່ມີຜົນງານ ແລະ ລົງວິໄນ ຕໍ່ຜູ້ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຕາມກໍລະນີໜັກ ຫຼື ເບົາ;

5. ປະຕິບັດໜ້າທີ່ອື່ນໆ ທີ່ກົດໝາຍ ໄດ້ກຳນົດ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານປະເມີນລາຄາທີ່ດິນຂັ້ນບ້ານ**

ອົງການຄຸ້ມຄອງວຽກງານປະເມີນທີ່ດິນຂັ້ນບ້ານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳອື່ນໆ ທີ່ຂັ້ນເທິງມອບໝາຍ ຢ່າງເປັນປົກກະຕິ ແລະ ກວ້າງຂວາງ ເພື່ອເຮັດໃຫ້ ປະຊາຊົນ ຮັບຮູ້, ເຊື່ອມຊຶມ ແລະ ພ້ອມກັນເຂົ້າຮ່ວມຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;

2. ປຸກລະດົມຂົນຂວາຍ ທົ່ວສັງຄົມ ແລະ ປະຊາຊົນ ໃຫ້ຄວາມຮ່ວມມື ໃນການຄຸ້ມຄອງການປະເມີນລາຄາທີ່ດິນ ດ້ວຍການສະໜອງຂໍ້ມູນຂ່າວສານ ທີ່ຊັດເຈນ ແລະ ຖືກຕ້ອງ ຕາມຄວາມເປັນຈິງ;

3. ລາຍງານ ການເຄື່ອນໄຫວວຽກງານ, ການປ່ຽນແປງ ສະພາບເສດຖະກິດ-ສັງຄົມ, ສະພາບການເພິ່ງພາ ຂອງປະຊາກອນ, ການເພິ່ງພາ ລາຄາຊື້-ຂາຍສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ເປັນແຕ່ລະໄລຍະ ເພື່ອເປັນຂໍ້ມູນ ໃນການປັບປຸງການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ເປັນແຕ່ລະໄລຍະ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ຄວາມເປັນຈິງ;

4. ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະເໜີຍ້ອງຍໍ ຜູ້ທີ່ມີຜົນງານ ແລະ ລົງວິໄນ ຕໍ່ຜູ້ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຕາມກໍລະນີໜັກ ຫຼື ເບົາ;

5. ປະຕິບັດໜ້າທີ່ອື່ນໆ ທີ່ກົດໝາຍ ໄດ້ກຳນົດ.

**ມາດຕາ 23 ອົງການຕິດຕາມກວດກາ**

ອົງການຕິດຕາມກວດກາ ການກຳນົດການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ດັ່ງນີ້:

1. **ອົງການກວດກາພາຍໃນ**
- ອົງການປົກຄອງແຂວງຊຽງຂວາງ;
- ພະແນກກວດກາລັດຂັ້ນແຂວງ;
- ຂະແໜງກວດກາ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

2. **ອົງການກວດກາພາຍນອກ**
- ສະພາປະຊາຊົນແຂວງຊຽງຂວາງ;
- ອົງການກວດສອບພາກເໜືອ;
- ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນຂັ້ນແຂວງ.

## ໝວດທີ V
## ຂໍ້ຫ້າມ

**ມາດຕາ 24 ຂໍ້ຫ້າມ ສຳລັບ ພະນັກງານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດ**

1. ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ແລະ ການກະທຳ ດັ່ງນີ້:

2. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ ເມີນເສີຍຕໍ່ ການປະຕິບັດໜ້າທີ່, ກົດໜ່ວງ ຫຼື ຖ່ວງດຶງ ການຄົ້ນຄວ້າເອກະສານ, ຮຽກຮ້ອງ, ທວງເອົາ, ຮັບເອົາ ສິນບົນ ຈາກຜູ້ມີສິດນຳໃຊ້ ຫຼື ເຈົ້າຂອງທີ່ດິນ ຫຼື ສິ່ງປຸກສ້າງ; ລັກລອບ, ປອມແປງເອກະສານ ຫຼື ໃຫ້ຂໍ້ມູນເທັດ ກ່ຽວກັບ ລາຄາທີ່ດິນ ແລະ ສິ່ງປຸກສ້າງ;

3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບກ່ຽວກັບວຽກງານຄຸ້ມຄອງການປະເມີນ ແລະ ກຳນົດລາຄາທີ່ດິນ ແລະ ສິ່ງປຸກສ້າງທີ່ການຈັດຕັ້ງມອບໝາຍໃຫ້.

4. ປະຕິເສດ ບໍ່ຮັບການສະເໜີ,ຄຳຮ້ອງຂອງປະຊາຊົນກ່ຽວກັບການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ.

5. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 25 ຂໍ້ຫ້າມ ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ຫ້າມເຈົ້າຂອງສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ຫຼື ບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ ມີພຶດຕິກຳ ຫຼື ການກະທຳ ດັ່ງນີ້:

1. ປົກປິດ, ເຊື່ອງອຳ, ບໍ່ຈິງໃຈໃນການແຈ້ງຂໍ້ມູນ, ໃຊ້ຄວາມຮຸນແຮງ ແລະ ແອບອ້າງ, ນາບຂູ່ພະນັກງານ ທີ່ເປັນການລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້;

2. ປອມແປງຫຼັກຖານ ຂໍ້ມູນ,ໃບຕາດິນ,ປະທັບຕາ,ລາຍເຊັນ ແລະ ເອກະສານຕ່າງໆກ່ຽວກັບລາຄາທີ່ດິນ ແລະ ສິ່ງປຸກສ້າງ.

3. ໃຫ້ສິນບົນ, ສົມຮູ້ຮ່ວມຄິດກັບພະນັກງານປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ປອມແປງ, ແຈ້ງ, ສ້າງຂໍ້ມູນ ເທັດ, ສະໜອງຂໍ້ມູນອັນບໍ່ຖືກຕ້ອງຕາມຄວາມຈິງ ເພື່ອອຳນວຍຄວາມສະດວກ ແລະ ຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ;

4. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ ທີ່ໄດ້ປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ມີຜົນງານ ທີ່ໄດ້ປະກອບສ່ວນເຂົ້າ ວຽກງານການປະເມີນເຂດລາຄາທີ່ດິນ ແລະ ສິ່ງປຸກສ້າງ ຈະໄດ້ຮັບ ການຍ້ອງຍໍ ຫຼື ນະໂຍບາຍອື່ນໆຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢ່າງເໝາະສົມ.

### ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນ ຄ່າເສຍຫາຍທາງແພ່ງ ຫຼື ຖືກດຳເນີນ ຄະດີທາງອາຍາ ແລ້ວແຕ່ກໍລະນີໜັກ ຫຼື ເບົາ ຕາມກົດໝາຍ.

## ໝວດທີ VII
## ບົບບັນຍັດສຸດທ້າຍ

### ມາດຕາ 28 ການຈັດຕັ້ງປະຕິບັດ

ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ນຳເອົາຂໍ້ຕົກລົງສະບັບນີ້ ພ້ອມທັງແຜນທີ່ເຂດປະເມີນລາຄາທີ່ດິນ ໄປຈັດຕັ້ງຜັນຂະຫຍາຍ, ໂຄສະນາປະຊາສຳພັນເຜີຍແຜ່ທາງສື່ມວນຊົນ ໃຫ້ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຄຸ້ມຄອງນຳໃຊ້ທີ່ດິນ ຮັບຊາບຢ່າງເປັນເອກະພາບ, ທົ່ວເຖິງ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 29 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງ ສິບຫ້າວັນ ທີ່ໄດ້ລົງຈົດໝາຍເຫດທາງ ລັດຖະການເປັນຕົ້ນໄປ; ເນື້ອໃນນິຕິກຳໃຕ້ກົດໝາຍ ຂອງແຂວງ, ເມືອງ ສະບັບໃດ ທີ່ອອກກ່ອນ ແລະ ຂັດກັບ ຂໍ້ຕົກລົງສະບັບນີ້ ແມ່ນຖືກລົບລ້າງ.

ເຈົ້າແຂວງ

ບຸນຕົ້ນ ຈັນທະພອນ

# ຕາຕະລາງລາຄາທີ່ດິນ ທີ່ຖືກກຳນົດຕາມການປະເມີນ ໃນ 7 ເມືອງ ຂອງແຂວງຊຽງຂວາງ

## 1. ເຂດປະເມີນລາຄາທີ່ດິນ ຂອງເມືອງແປກ

| ລະຫັດ | ຊື່ບ້ານ | ລາຄາປະເມີນທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ຖະໜົນຫລັກ | ຖະໜົນເຊື່ອມຕໍ່ | ຖະໜົນສາຍແຈກ | ທາງຫາງວຕັ້ງເດີມ |
| A1 | ໂພນສະຫວັນໄຊ, ໂພນສະຫວັນກາງ, ໂພນສະຫວັນໃຕ້, ສີໂພນໄຊ, ເທີນ, ໂພນງາມເໜືອ, ໂພນງາມໃຕ້, ຍອນ | 850,000 | 400,000 | 200,000 | 50,000 |
| A2 | ໂພນສະຫວັນກາງ, ເທີນ, ໂພນສະຫວ່າງ, ໂພນມີໄຊ, ໂພນຄຳ, ໂພນສະອາດເໜືອ, ໂພນສະອາດໃຕ້, ໂພນງາມໃຕ້, ນ້ຳຫງ້າ. | 850,000 | 500,000 | 200,000 | 40,000 |
| A3 | ໂພນງາມໃຕ້, ໂງຍ, ນ້ຳຫງ້າ, ສາຍລົມ, ທົ່ງມີໄຊ, ໂພນທອງ. | 600,000 | 500,000 | 200,000 | 20,000 |
| A4 | ໂພນສະຫວັນໄຊ, ສີໂພນໄຊ, ໂພນງາມເໜືອ, ໂພນງາມໃຕ້, ຍອນ, ໂງຍ, ລີ່. | 500,000 | - | 200,000 | 20,000 |
| A5 | ຍອນ, ໂພນສະຫວັນເໜືອ, ຄັງໄຊ, ຣົວະ, ມອນ, ວຽງ, ຖູ, ປອນ, ຊ້າງ, ນ້ຳເສີງ, ໜອງແຮນ | 180,000 | 80,000 | 50,000 | 10,000 |
| A6 | ໂພນສະຫວັນກາງ, ໂພນສະຫວັນໄຊ, ໂພນສະຫວັນເໜືອ, ນາພີງ. | 400,000 | 350,000 | 150,000 | 8,000 |
| A7 | ຍອນ, ໂງຍ, ລີ່, ນາຫອຍ, ສາຍລົມ. | 150,000 | 100,000 | 60,000 | 10,000 |
| A8 | ຍອນທອງ, ນ້ຳເກາະ, ດອງ, ຄັງໄຊ, ນາຫອຍ, ລາດງ່ອນ, ຫ້ວຍສົ້ງ, ມ່ວງພາ, ນາຟ້າ, ຍາບສີ, ບໍ່, ເຫຼັກ, ນາຄອນ, ວຽງນາຄອນ, ຫວ້ານ. | 80,000 | 40,000 | 20,000 | 6,000 |
| A9 | ລາດບອກ, ເປີບ, ນາເພີງ, ສີຄູນ, ຄັງວຽງ, ຄາຍ, ແກ່ວ, ວຽງໄຊ, ໂພສີລາດເທີນ, ຍອດງື່ມ, ທ່າໂຈກ, ໝີ່, ດູ່, ມອນ, ປຸ່ງປັນ, ໝັ້ນຊີມ, ໜັງ, ນາລາມ, ບອກກີບ, ພູສັນ, ອໍ້ອັ່ນ, ນາຄຳແພງ. | 70,000 | 30,000 | 10,000 | 4,000 |
| A10 | ໂພນມີໄຊ , ປອນ, ໂພນຄຳ, ໂພນທອງ, ນາໂອ, ນ້ຳຕົ້ມ. | 200,000 | - | 180,00 | 10,000 |
| A11 | ໂພນທອງ, ສາຍລົມ, ທົ່ງມີໄຊ, ນາໂອ, ນາຫອຍ, ລາດງ່ອນ. | - | 150,000 | 80,000 | 8,000 |
| A12 | ລາດງ່ອນ, ນາຄູນ, ນາເຮືອງ, ອ່າງ, ນ້ຳຕົ້ມ, ລາດຮ້ອງ, ພູຫຸ້ມ, ໂຕນເໜືອ, ໂຕນໃຕ້ພູເກາງ, ໜອງຫຼວງ, ໝີ່, ນາຊູ, ພົ້ນ, ປຸ່ງແວນ, ຄອງ, ນາ, ວຽງທອງ, ໜອງ, ວຽງຄຳ. | - | 30,000 | 20,000 | 5,000 |
| A13 | ນາໂອ, ນ້ຳຕົ້ມ, ລາດຮ້ອງ, ນານູ. | 200,000 | 80,000 | 20,000 | 5,000 |

2. ເຂດປະເມີນລາຄາທີ່ດິນ ຂອງເມືອງຄໍາ

| ລະຫັດ | ຊື່ບ້ານ | ລາຄາປະເມີນທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ຖະໜົນຫລັກ | ຖະໜົນເຊື່ອມຕໍ່ | ຖະໜົນສາຍແຈກ | ທາງຫຼວງດັ່ງເດີມ |
| B 1 | ບ. ຈອມທອງ | 400,000 | 350,000 | 300,000 | 12,000 |
| B 2 | ບ. ກ້ວາຍໝໍ້, ຈອມທອງ, ຕອງ,ດຸງຄໍາ,ຊາງ, ສົນ | 350,000 | - | 150,000 | 10,000 |
| B 3 | ບ. ສົນ, ຫີນ,ຊຽງກ່ຽວ, ຕອງ, ບານ, ສົນພັນນາ ທອງໄຄ້ວຽງ, ຍອດເກື້ອພູເມືອງ,ໂພໄຊ,ຈອມສີ, ພຽງຄົບ, ວຽງຄໍາ, ມ່ວງໄຊ, ຊາມ, ຊຶມ, ນາຕູມ | 300,000 | 150,000 | 50,000 | 10,000 |
| B 4 | ບ. ລ້ອງປິວ, ນາເມືອງ, ນາຊຸງ, ບິວ, ໄຮໜ່ຽງ, ແລະ ນາດໍ່, ໜອງໃໝ່ກໍຄາຍ, ຊາຍນາດູ່, ຊິມ, ນາຕູມ | 150,000 | 60,000 | 20,000 | 10,000 |
| B 5 | ບ. ຊາງ, ດຸງຄໍາ, ດອກຄໍາ, ລາດບົນ, ຍູ້ມຈອງ, ຕາດ, ໂພນຄໍາ,ກົງ້ວ, ຮີບ,ຖາງ, ພຽງດີ,ໄຮໜ່ຽງ, ບິວ, ນາຊຸງ, ນາເມືອງ | 200,000 | 100,000 | 50,000 | 10,000 |
| B 6 | ບ. ພຽງດີ, ນາຍອງ, ຜາທ້າງ, ແງ້ວ,ຄັງແຄະ, ຮີບຖາງ, ຮອດ, ນໍ້າຮົ່ມ,ຫ້ວຍພັດ | 250,000 | 100,000 | 50,000 | 10,000 |
| B 7 | ບ. ຍອດເກື້ອພູເມືອງ | 50,000 | - | 20,000 | 10,000 |
| B 8 | ບ. ນາພັນ, ສໍາພັນໄຊ, ນໍ້າຈາກ, ທ່າ, ນາໄຊ, ບອມພຽງ, ສີບອໍ້, ນາຫຼວງ, ນາມອນ | - | 15,000 | 8,000 | 6,000 |
| B 9 | ບ. ໂພນຂາມ, ໂພນແຈ້ງ, ນໍ້າທຸ່ມ, ຜາກອກ, ຍອດປຽດ, ນາເໜືອຍ | - | 20,000 | 10,000 | 6,000 |
| B 10 | ບ. ຜາທ້າງ, ໂພສີ, ນາພຽງ, ໂພນທັນ, ໂພນໄຊ, | 20,000 | - | 5,000 | 4,000 |
| B 11 | ຫ້ວຍທອນ, ວຽງ, ສວນມອນ, ໜອງໂອນ, ສອງນໍ້າລຽງ, ແກ່ວເລີກ, ຊຸມແມນ, ພູຫີນ, ສັນແຟນ, ສັນຄໍາ, ສັນໂພ, ຫາດຄໍາ, ວັງຊິງ, ແກ້ວເຮືອ, ສົນແກ້ວ, ພຽງພ່າງ, ສີບເປີນ, ແທ່ນໂທ້, ແທ່ນຈອງ, ພຽງໂຄ້ງ, ກາງຄໍາ, ພຽງດ້າງ | 15,000 | - | 4,000 | 3,000 |

## 3. ເຂດປະເມີນລາຄາທີ່ດິນ ຂອງເມືອງໜອງແຮດ

| ລະຫັດ | ຊື່ບ້ານ | ລາຄາປະເມີນທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ຖະໜົນຫລັກ | ຖະໜົນເຊື່ອມຕໍ່ | ຖະໜົນສາຍແຈກ | ທາງຫລວງດັ່ງເດີມ |
| C1 | ນ້ຳກວາງ | 280,000 | 200,000 | 150,000 | 8,000 |
| C2 | ຖ້ຳໄຊ, ໜອງແຮດເໜືອ, ໜອງຂຽວ | 300,000 | 280,000 | 200,000 | 8,000 |
| C3 | ໜອງແຮດໃຕ້, ຫ້ວຍຂີ້ລີງ | 250,000 | 200,000 | 120,000 | 8,000 |
| C4 | ໜອງຊ້າງ, ພັກຫຼັກ, ປ່າຂົມ, ໜອງແຫຼ້ | 200,000 | 100,000 | 80,000 | 6,000 |
| C5 | ພັກແຄະເໜືອ, ພັກແຄະໃຕ້ | 220,000 | 150,000 | 130,000 | 6,000 |
| C6 | ຫ້ວຍຊວງ, ນ້ຳເໜັນ, ນ້ຳກົ້ນງົວ | 80,000 | 50,000 | 30,000 | 5,000 |
| C7 | ກະບົ້, ຈ່າໝື່ນ, ຜາຫຼວງ, ໂພນໄຊ, ສາມແຈ, ຫ້ວຍເທົ່າ, ຖ້ຳຫ້າວ, ນ້ຳປີ, ຊຳຍອກ, ຫ້ວຍຄ້າງ, ປ່າລັນ, ໜອງຂຽວ | - | 40,000 | 20,000 | 5,000 |
| C8 | ຖ້ຳເສືອ, ສາມແຈ, ແກ່ວປະຕູ, ຖ້ຳຄູ້, ສົມໂດນ, ປ່າຫົກ. | - | 50,000 | 30,000 | 5,000 |
| C9 | ແກ່ວບ່ອນ, ຫ້ວຍລົມ, ຫ້ວຍນາ, ສອງຫ້ອງ, ຫ້ວຍແລນ, ຫາດບໍ່, ຫ້ວຍກໍ້ | - | 40,000 | 20,000 | 4,000 |
| C10 | ກຸ່ມບໍເຢຍ, ກຸ່ມຫ້ວຍລົມ, ກຸ່ມກໍບໍ່ | - | 40,000 | 20,000 | 4,000 |
| C11 | ຄັງພະນຽນ | 200,000 | 150,000 | 100,000 | 6,000 |
| C12 | ຫ້ວຍຂີ້ລີງ, ປ່າກາ, ດິນດຳ | 150,000 | 60,000 | 40,000 | 6,000 |
| C13 | ໜອງກົບ, ຍອດຮວາຍ, ຍອດຄາ | 160,000 | 70,000 | 40,000 | 6,000 |
| C14 | ຜາຫວາຍ, ຄອກໝູ, ຜາແອ່ນ, ບວມດາວ, ຜາອໍ້, ຜາງອນ | - | 40,000 | 20,000 | 4,000 |
| C15 | ຍອດຄໍ, ພູຫົວຊ້າງ, ຜາປ່ອງ, ຜາເພີ, ຫ້ວຍຄ້ອງ, ວັງຄຳ, ກໍຫາດ, ກໍມອນ, ຍອດຊາວ, ແກ່ວກ່ອງ | - | 50,000 | 20,000 | 4,000 |
| C16 | ຫ້ວຍເດື່ອ, ໜອງຂຽວ, ໜອງແຮດໃຕ້, ຜາແອ່ນ, ແກ້ງແລດ, ນາເມືອງ, ລວງກ້ວງ | - | 60,000 | 30,000 | 5,000 |

4. ເຂດປະເມີນລາຄາທີ່ດິນ ຂອງເມືອງຄູນ

| ລະຫັດ | ຊື່ບ້ານ | ລາຄາປະເມີນທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ຖະໜົນ ຫລັກ | ຖະໜົນ ເຊື່ອມຕໍ່ | ຖະໜົນ ສາຍແຈກ | ທາງຫຼວງ ດັ່ງເດີມ |
| D 1 | ບ. ນາໄຊ, ສີພົມ, ເພຍວັດ, ໂພນແຍງ | 400,000 | 300,000 | 250,000 | 10,000 |
| D 2 | ບ. ນາໄຊ, ຊ້າງ, ສີພົມ, ຫ້ວຍແຈະ | 300,000 | 200,000 | 150,000 | 10,000 |
| D 3 | ບ. ເພຍວັດ, ໂພສີ, ທຸ້ມ, ນາໂພ, ໄຜ່ | 300,000 | 150,000 | 100,000 | 10,000 |
| D 4 | ບ. ຊ້າງ, ນາອູ່, ໜອງຜື, ໜອງນ້ຳ, ກໍ້ວ, ນາຕໍ, ຍຸນສີໄຊຊະນະ, ທົ່ງ, ໂພນໄຊ,ດົງດ່ານ | 200,000 | 100,000 | 50,000 | 10,000 |
| D 5 | ບ. ນາສີ, ເພຍວັດ,ໂພສີ,ໂພນແຍງ, ນາຮໍ້. | 80,000 | 60,000 | 20,000 | 8,000 |
| D 6 | ບ. ທຸ້ມ, ນາໂພ, ສັນຄີງ, ຊໍາຍຸງ, ນາທອງ, ນາລາມ, ອົ້ມ, ນາພະສາດ, ໜອງ, ຕົ້ນໃຕ້, ແກ່ວກ້ວາງ,ສັນຫຼວງ,ຜາເຜິ້ງ, ຕົ້ນເໜືອ, ພັກຮົ້ງ, ປຽງ, ເຄັກ, ແກ່ວແສດ, ຖ້ຳຫົວເລົ່າ, ເປີ້ນ, ນາຮອນ, ຊໍາກ້ວາງ, ເມືອງ, ຢຽມ, ຢຽນ, ຫີນໂງ່ນ, ນາສີມ, ສີວຽງຄໍາ, ພູວຽງ ຊຽງໃໝ່ | 60,000 | 30,000 | 10,000 | 5,000 |
| D 7 | ບ. ຊໍາຍຸງ, ແກ່ວເລີກ, ພູມຸ້ງເມືອງ, ນໍ້າລັນ, ນາທອງ, ນາລາມ, ອົ້ມ, ໜອງຫຼວງ, ສີບຸນເຮືອງ, ນາເມືອງ, ນາພະສາດ, ສີວຽງຄໍາ, ດອກໄມ້, ແທ່ນພູນ, ຄາບ, ຫ້ວຍລຸນ, ແທ່ນທອງ, ຊົ້ນນ້ອຍ,ຜາຂາວ. | 80,000 | - | 20,000 | 4,000 |
| D 8 | ບ. ດົງດ່ານ, ບົວເໜືອ, ທົ່ງ, ໂພນໄຊ, ບົວໃຕ້, ນາຈັນ, ໜອງນໍ້າ, ກໍ້ວ | - | 30,000 | 15,000 | 4,000 |
| D 9 | ບ. ນໍ້າພານ, ຄັງໂຮງ,ຫ້ວຍຫົກ, ທ່າລິນ, ຜາຫຼົ່ອມ,ພັກຊີວະ,ປ່າຄາ. | - | 80,000 | 40,000 | 4,000 |
| D10 | ບ. ຖ້ຳ, ຫອຍ,ທົ່ງ, ໂພນໄຊ, ນາຕໍ | - | 50,000 | 20,000 | 4,000 |

5. ເຂດປະເມີນລາຄາທີ່ດິນ ຂອງເມືອງໝອກ

| ລະຫັດ | ຊື່ບ້ານ | ລາຄາປະເມີນທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ຖະໜົນຫລັກ | ຖະໜົນເຊື່ອມຕໍ່ | ຖະໜົນສາຍແຈກ | ທາງທຽວດັ່ງເດີມ |
| E 1 | ບ. ນາຄ່ອນ | 200,000 | 140,000 | 80,000 | 15,000 |
| E 2 | ບ. ນ້ຳຊອງ, ນ້ຳຢັງມ | 180,000 | 100,000 | 40,000 | 10,000 |
| E 3 | ບ. ນາຄ່ອນ, ນາແຄ, ຊຽງເໜັ້ນ, ຜາແດງ, ນ້ຳຈັດ | 180,000 | 100,000 | 25,000 | 7,000 |
| E 4 | ບ, ຖ້ຳສ່ອຍ, ນ້ຳເຢັນ, ຄັງວຽງ, ນາເມືອງ | 180,000 | - | 80,000 | 7,000 |
| E 5 | ບ. ທົ່ງເປີ້ | 30,000 | - | 8,000 | 5,000 |
| E 6 | ບ. ນ້ຳທງາດ | - | 40,000 | 20,000 | 5,000 |
| E 7 | ບ. ນາມອນ,ນ້ຳຈາວໃຕ້,ໝໍ້,ນ້ຳກ້ຽວ,ປອກມູນ | - | 40,000 | 20,000 | 7,000 |

6. ເຂດປະເມີນລາຄາທີ່ດິນ ຂອງເມືອງພູກູດ

| ລະຫັດ | ຊື່ບ້ານ | ລາຄາປະເມີນທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ຖະໜົນຫລັກ | ຖະໜົນເຊື່ອມຕໍ່ | ຖະໜົນສາຍແຈກ | ທາງທຽວດັ່ງເດີມ |
| F 1 | ບ. ພູວຽງ, ພຽງຫຼວງ | 110,000 | 80,000 | 60,000 | 8,500 |
| F 2 | ບ. ພູວຽງ,ທອດຕັນ | - | 50,000 | 35,000 | 8,000 |
| F 3 | ບ. ມາງ, ໜອງຕັ່ງ, ສຸຍ, ຈອມສີ | 50,000 | 40,000 | 30,000 | 7,500 |
| F 4 | ບ. ປັ້ງປາງ, ນ້ຳຈັດ, ສີມບູນ, ໄຊອຸດົມ | 40,000 | 30,000 | 25,000 | 6,500 |
| F 5 | ບ. ພຽງຫຼວງ, ຊາຍ, ຊອງ, ນາຄອນ, ໜອງກາງ ປິວ, ດູກ, ອ່າງ, ສັກສອດ,ພູແຊວ | 50,000 | 40,000 | 30,000 | 7,000 |
| F 6 | ບ. ແປນ, ນາຊາຍທອງ, ພູວຽງ | - | 40,000 | 35,000 | 7,000 |
| F 7 | ບ. ທອດຕັນ, ຮະງອມ, ນາຊາຍທອງ, ໂຈຍ ,ຢາຍ, ເຄິງ | - | 40,000 | 35,000 | 7,000 |
| F 8 | ບ. ປຸງໝັ້ນ, ບົງ, ມີໄຊ, ແລທອງ, ໂຈຍ, ຢາຍ, ເຄິງ | 45,000 | 35,000 | 30,000 | 7,000 |
| F 9 | ບ. ແລທອງ, ຍອດແພ, ນາຂ່າ, ມ່ວງຄຳ, ລ້ອງຄານ, ລ້ອງຄາວ,ພຽງດີ,ສິບຄາວ | - | 35,000 | 25,000 | 6,000 |
| F 10 | ບ. ມຽນ, ລ້ອງຣາງ, ວັງໂຕ່ງ, ລັງຈອງ | - | 30,000 | 20,000 | 6,000 |
| F 11 | ບ. ຊຽງງາ, ນ້ຳສາມ, ຊຽງແດດ | - | 30,000 | 20,000 | 6,000 |

## 7. ເຂດປະເມີນລາຄາທີ່ດິນ ຂອງເມືອງຜາໄຊ

| ລະຫັດ | ຊື່ບ້ານ | ລາຄາປະເມີນທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ຖະໜົນຫລັກ | ຖະໜົນເຊື່ອມຕໍ່ | ຖະໜົນສາຍແຈກ | ທາງຫຼວງດັ້ງເດີມ |
| G1 | ນາມູນລາດຄ້າຍ | 150,000 | 130,000 | 60,000 | 15,000 |
| G2 | ນາມູນລາດຄ້າຍ, ຊຽງດີ, ຫໍກາງ, ນາໂຄ້ | 100,000 | 50,000 | 30,000 | 10,000 |
| G3 | ນາມູນລາດຄ້າຍ, ຫໍໄຊ, ໄຣ, ນາເພຍນາແຖງ, ໂພນ | 50,000 | 40,000 | 30,000 | 10,000 |
| G4 | ນາຮຸງໜອງຫອຍ, ນາເພຍນາແຖງ | – | 40,000 | 30,000 | 10,000 |
| G5 | ນາມູນລາດຄ້າຍ, ນາຫ້ວານ, ຊີວ, ທາງຊຽງເໜືອ, ນາສີມ, ນາໂຄ້,ນໍ້າກະ | – | 40,000 | 30,000 | 10,000 |
| G6 | ນາສີມ, ລາດແສນ | 50,000 | 40,000 | 30,000 | 10,000 |
| G7 | ລາດແສນ, ງີ້ວ, ເຕົາ, ໂພສີ, ຫໍກາງ, ນາໂຄ້ | – | – | 20,000 | 10,000 |
| G8 | ງີ້ວ, ເຕົາ, ໂພສີ, ຫໍກາງ, ຖໍ້າພຸກ, ຫໍສີມ, ສ່ອມ, ໜອງ, ທຸ່ມນາຕຽງ, ນາຂື່, ພາເໜືອ, ພາໃຕ້, ນາໄຊ, ຈ້ານໍ້າ, ປຸ່ງ. | - | – | 5,000 | 3,000 |
| G9 | ນໍ້າສຽມ, ຖໍ້າຕໍາລຶງ, ນາປັນ. | - | 10,000 | 5,000 | 3,000 |

ທີ່ຊຽງຂວາງ, ວັນທີ......................

ເຈົ້າແຂວງ

ແຂວງຊຽງຂວາງ
ເຈົ້າແຂວງ

ບຸນຕົ້ນ ຈັນທະພອນ